**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ ເລກທີ 2904 /ກງ

ນະຄອນຫຼວງວຽງຈັນ, ວັນທີ 08 ກໍລະກົດ ໒໐໒໑

# <u>ແຈ້ງການ</u>

ຮຽນ: - ທ່ານ ລັດຖະມົນຕີ ບັນດາກະຊວງ, ຫົວໜ້າອົງການທຽບເທົ່າ;
- ເຈົ້າຄອງນະຄອນຫຼວງ;
- ເຈົ້າແຂວງ, ເຈົ້າເມືອງ, ເຈົ້ານະຄອນ, ເທດສະບານ ແລະ ລັດວິສາຫະກິດ ໃນຂອບເຂດທົ່ວປະເທດ.

ເລື່ອງ: ແຈ້ງການປະກາດນຳໃຊ້ເອກະສານປະມູນສະບັບເອກະພາບປີ 2021 ເປັນທາງການ.

- ອີງຕາມ ກົດໝາຍວ່າດ້ວຍ ຊັບສິນຂອງລັດ (ສະບັບປັບປຸງ) ເລກທີ 14/ສພຊ, ລົງວັນທີ 05 ກໍລະກົດ 2012.
- ອີງຕາມ ກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 144/ນຍ, ລົງວັນທີ 08 ພຶດສະພາ 2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ.
- ອີງຕາມ ໜັງສືສະເໜີຂອງກົມຄຸ້ມຄອງຊັບສິນຂອງລັດ ສະບັບເລກທີ 1356/ຄຊລ, ລົງວັນທີ 29 ມີນາ 2021.

ເນື່ອງຈາກການຍົກລະດັບດຳລັດວ່າດ້ວຍການປະມູນຈັດຊື້ສິນຄ້າ, ການກໍ່ສ້າງສ້ອມແປງ ແລະ ການບໍລິການດ້ວຍທຶນຂອງລັດ ເລກທີ 03/ນຍ, ລົງວັນທີ 09/01/2004 ເປັນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ຊຶ່ງເປັນກົດໝາຍໃໝ່ ຈຶ່ງຈຳເປັນຕ້ອງໄດ້ປັບປຸງເນື້ອໃນເອກະສານປະມູນສະບັບເອກະພາບປີ 2015 (ສະບັບເກົ່າ) ໃຫ້ສອດຄ່ອງກັບກົດໝາຍໃໝ່. ປັດຈຸບັນການປັບປຸງ ແລະ ຮຽບຮຽງຄືນໃໝ່ໄດ້ສຳເລັດ ເປັນເອກະສານປະມູນສະບັບເອກະພາບປີ 2021 ດັ່ງມີລາຍລະອຽດລຸ່ມນີ້:

- ເອກະສານປະມູນສົມທຽບລາຄາ ສຳລັບການຈັດຊື້ ສິນຄ້າ ແລະ ການບໍລິການວຽກງານ;

- ເອກະສານປະມູນສົມທຽບລາຄາ ສຳລັບການກໍ່ສ້າງ ແລະ ສ້ອມແປງ;
- ເອກະສານປະມູນເປີດກ້ວາງ ສຳລັບການຈັດຊື້ ສິນຄ້າ ແລະການບໍລິການວຽກງານ;
- ເອກະສານປະມູນເປີດກວ້າງ ສຳລັບການກໍ່ສ້າງ ແລະ ສ້ອມແປງ;

ບັນດາເອກະສານປະມູນຈັດຊື້ສະບັບເອກະພາບນີ້ ຈະນຳໃຊ້ຮ່ວມກັນກັບການຈັດຊື້ ທີ່ໃຊ້ເງິນງົບປະມານພາຍໃນ, ເງິນກູ້ຢືມ ແລະ ຊ່ວຍເຫຼືອລ້າຈາກ ທະນາຄານໂລກ, ທະນາຄານພັດທະນາອາຊີ ແລະ ຜູ້ໃຫ້ທຶນອື່ນໆ ສະນັ້ນ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດໃຫ້ຖືກຕ້ອງ, ສອດຄ່ອງກັບກົດໝາຍ, ລະບຽບການ ແລະ ເອກະພາບກັນນຳໃຊ້ໃນຂອບເຂດທົ່ວປະເທດ ກະຊວງການເງິນ ຈຶ່ງອອກແຈ້ງການມາຍັງ ບັນດາກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ລັດວິສາຫະກິດ ໃນຂອບເຂດທົ່ວປະເທດ ໃຫ້ນຳໃຊ້ເອກະສານປະມູນສະບັບເອກະພາບປີ 2021 ແທນປີ 2015.

ດັ່ງນັ້ນ, ຈຶ່ງອອກແຈ້ງການມາຍັງບັນດາທ່ານ ເພື່ອຊາບ ແລະ ຊີ້ນຳການຈັດຕັ້ງປະຕິບັດການຈັດຊື້ຕາມການແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີກະຊວງການເງິນ

ບຸນໂຈມ ອຸບົນປະເສີດ